ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 655 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 09. ທັນວາ. 2021

# ດຳລັດ
# ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມາທິການ ເພື່ອການປົກປ້ອງສັງຄົມ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ໜັງສືສະເໜີ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະບັບເລກທີ 3758/ຮສສ, ລົງວັນທີ 22 ກັນຍາ 2021;
- ອີງຕາມ ໜັງສືສະເໜີ ຂອງກະຊວງພາຍໃນ ສະບັບເລກທີ 329/ພນ, ລົງວັນທີ 17 ພະຈິກ 2021.

## ນາຍົກລັດຖະມົນຕີ ອອກດຳລັດ:
## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວຂອງຄະນະກຳມາທິການເພື່ອການປົກປ້ອງສັງຄົມ ແນໃສ່ ຈັດຕັ້ງຜັນຂະຫຍາຍ, ຕິດຕາມ, ຊຸກຍູ້, ປະເມີນ ແລະ ສະຫຼຸບລາຍງານ ການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແຫ່ງຊາດ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະກຳມາທິການ ເພື່ອການປົກປ້ອງສັງຄົມ ມີຢູ່ ສອງ ຂັ້ນ ຄື: ຂັ້ນສູນກາງ ແລະ ຂັ້ນແຂວງ.

1. **ຄະນະກຳມາທິການ ເພື່ອການປົກປ້ອງສັງຄົມ ຂັ້ນສູນກາງ**
   ຄະນະກຳມາທິການ ເພື່ອການປົກປ້ອງສັງຄົມ ຂັ້ນສູນກາງ ຂຽນເປັນຕົວອັກສອນຫຍໍ້ວ່າ **"ຄປສ"** ແມ່ນການຈັດຕັ້ງໜຶ່ງຂອງລັດຖະບານ ທີ່ບໍ່ປະຈຳການ ໂດຍມີຈຸດປະສານງານລວມ ຢູ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ມີພາລະບົດບາດເປັນເສນາທິການຊ່ວຍລັດຖະບານ ໃນການຄົ້ນຄວ້າ, ຊີ້ນຳ, ຕິດຕາມ, ຊຸກຍູ້, ປະເມີນ, ສະຫຼຸບລາຍງານ ແລະ ປະສານງານ ກັບບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ກ່ຽວກັບການຈັດຕັ້ງປະຕິບັດ ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ.
2. **ຄະນະກຳມາທິການ ເພື່ອການປົກປ້ອງສັງຄົມ ຂັ້ນແຂວງ**
   ຄະນະກຳມາທິການ ເພື່ອການປົກປ້ອງສັງຄົມ ຂັ້ນແຂວງ ຂຽນເປັນຕົວອັກສອນຫຍໍ້ວ່າ **"ຄປຂ"** ແມ່ນການຈັດຕັ້ງໜຶ່ງ ທີ່ບໍ່ປະຈຳການ ຂອງແຂວງ-ນະຄອນຫຼວງ ໂດຍມີຈຸດປະສານງານລວມ ຢູ່ພະແນກແຮງງານ

ແລະ ສະຫວັດດີການສັງຄົມ, ມີພາລະບົດບາດເປັນເສນາທິການຊ່ວຍຄະນະກໍາມາທິການ ເພື່ອການປົກປ້ອງສັງຄົມ ຂັ້ນສູນກາງ, ເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງ ຄົ້ນຄວ້າ, ຊີ້ນໍາ, ຕິດຕາມ, ຊຸກຍູ້, ປະເມີນ, ສະຫລຸບລາຍງານ ແລະ ປະສານງານ ໃນການນໍາພາຈັດຕັ້ງປະຕິບັດແຜນການ, ແຜນງານ, ໂຄງການ ແລະ ກິດຈະກໍາ ກ່ຽວກັບຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ຢູ່ຂັ້ນທ້ອງຖິ່ນ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

### ມາດຕາ 3 ໜ້າທີ່

1. **ຄະນະກໍາມາທິການ ເພື່ອການປົກປ້ອງສັງຄົມ ຂັ້ນສູນກາງ ມີໜ້າທີ່ ດັ່ງນີ້:**
   1) ປະຕິບັດນິຕິກໍາ ຂອງສະພາແຫ່ງຊາດ, ຄະນະປະຈໍາສະພາແຫ່ງຊາດ, ປະທານປະເທດ, ລັດຖະບານ ແລະ ນາຍົກລັດຖະມົນຕີ ວາງອອກ ທີ່ກ່ຽວຂ້ອງກັບຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ຢ່າງເຂັ້ມງວດ;
   2) ຄົ້ນຄວ້າ ແລະ ພິຈາລະນາຮັບຮອງ ແຜນການ, ແຜນງານ, ໂຄງການ, ກິດຈະກໍາ ແລະ ງົບປະມານ ກ່ຽວກັບ ການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ທີ່ໄດ້ກໍານົດໄວ້;
   3) ໂຄສະນາເຜີຍແຜ່ ເນື້ອໃນຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໃຫ້ບັນດາຂະແໜງການ ຂອງລັດ ແລະ ພາກສ່ວນຕ່າງໆໃນສັງຄົມ ຢູ່ຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ໃຫ້ມີຄວາມຮັບຮູ້ ເຂົ້າໃຈ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດ ໃຫ້ມີປະສິດທິຜົນ;
   4) ຊຸກຍູ້ຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ເປັນເຈົ້າການ ຜັນຂະຫຍາຍເນື້ອໃນຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໃຫ້ເປັນແຜນການ, ແຜນງານ ແລະ ໂຄງການ ໃຫ້ຕິດພັນ ກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງແຕ່ລະພາກສ່ວນ ໃນແຕ່ລະໄລຍະ;
   5) ປະສານງານສົມທົບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນ ໃນການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໃນແຕ່ລະໄລຍະ;
   6) ສ້າງລະບົບຂໍ້ມູນຂ່າວສານ ທີ່ກ່ຽວຂ້ອງກັບຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ເພື່ອເປັນບ່ອນອີງໃຫ້ແກ່ການພັດທະນາ ແລະ ການບໍລິຫານຍຸດທະສາດປົກປ້ອງສັງຄົມແຫ່ງຊາດ;
   7) ຊີ້ນໍາ, ຊຸກຍູ້, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດແຜນປະຕິບັດງານຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໃຫ້ສໍາເລັດຕາມແຜນການທີ່ໄດ້ກໍານົດໄວ້ ໃນແຕ່ລະໄລຍະ
   8) ດໍາເນີນການປະເມີນ, ພິຈາລະນາຮັບຮອງ ແລະ ລາຍງານຜົນ ການຈັດຕັ້ງປະຕິບັດ ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ຕາມໄລຍະເວລາທີ່ໄດ້ກໍານົດໄວ້ ໃນແຕ່ລະໄລຍະ;

9) ຈັດກອງປະຊຸມພາຍໃນ ແລະ ເຂົ້າຮ່ວມກອງປະຊຸມຕ່າງປະເທດ ກ່ຽວກັບຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ຕາມການຕົກລົງ ຂອງຂັ້ນເທິງ;

10) ພົວພັນ ຮ່ວມມື, ປະສານງານກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ໃນວຽກທີ່ກ່ຽວຂ້ອງກັບຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ຕາມການຕົກລົງ ຂອງຂັ້ນເທິງ;

11) ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງຂັ້ນເທິງ.

**2. ຄະນະກຳມາທິການ ເພື່ອປົກປ້ອງສັງຄົມ ຂັ້ນແຂວງ ມີໜ້າທີ່ ດັ່ງນີ້:**

1) ຄົ້ນຄວ້າປະກອບຄວາມເຫັນຕໍ່ ນະໂຍບາຍ, ແຜນການ, ແຜນງານ ແລະ ໂຄງການກ່ຽວກັບ ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ທີ່ຈັດຕັ້ງປະຕິບັດ ຢູ່ທ້ອງຖິ່ນຂອງຕົນ ໃນແຕ່ລະໄລຍະ;

2) ເປັນເຈົ້າການຊີ້ນຳພະແນກການທີ່ກ່ຽວຂ້ອງຂອງທ້ອງຖິ່ນ ຈັດຕັ້ງຜັນຂະຫຍາຍເນື້ອໃນຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໃຫ້ເປັນແຜນການ, ແຜນງານ ແລະ ໂຄງການ ໃຫ້ຕິດພັນກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງແຕ່ລະທ້ອງຖິ່ນ ໃນແຕ່ລະໄລຍະ;

3) ໂຄສະນາເຜີຍແຜ່ ເນື້ອໃນຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໃຫ້ບັນດາພະແນກການຂອງລັດ ແລະ ພາກສ່ວນຕ່າງໆ ຢູ່ຂັ້ນແຂວງ ແລະ ຂັ້ນເມືອງ ໃຫ້ມີຄວາມຮັບຮູ້ ເຂົ້າໃຈ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດ ໃຫ້ມີປະສິດທິຜົນ;

4) ສ້າງແຜນຄວາມຕ້ອງການ ໃນການສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນ ໃນການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ຢູ່ທ້ອງຖິ່ນຂອງຕົນ;

5) ເກັບກຳ ແລະ ລາຍງານ ຂໍ້ມູນຂ່າວສານ ທີ່ກ່ຽວຂ້ອງກັບຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໃຫ້ ຄະນະກຳມາທິການ ເພື່ອການປົກປ້ອງສັງຄົມ ຂັ້ນສູນກາງ ໃນແຕ່ລະໄລຍະ;

6) ຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດ ແຜນການ, ແຜນງານ ແລະ ໂຄງການກ່ຽວກັບ ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ທີ່ຈັດຕັ້ງປະຕິບັດ ຢູ່ທ້ອງຖິ່ນຂອງຕົນ ໃນແຕ່ລະໄລຍະ;

7) ເປັນເຈົ້າການດຳເນີນການປະເມີນ, ພິຈາລະນາຮັບຮອງ ແລະ ລາຍງານຜົນການຈັດຕັ້ງປະຕິບັດແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ທີ່ຈັດຕັ້ງປະຕິບັດ ຢູ່ທ້ອງຖິ່ນຂອງຕົນ ໃນແຕ່ລະໄລຍະ;

8) ເຂົ້າຮ່ວມກອງປະຊຸມ ທີ່ກ່ຽວຂ້ອງກັບການປະຕິບັດ ແຜນການ, ແຜນງານ ແລະ ໂຄງການ ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ຕາມການຕົກລົງ ຂອງຂັ້ນເທິງ;

9) ພົວພັນ ຮ່ວມມື, ປະສານງານກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ໃນວຽກທີ່ກ່ຽວຂ້ອງກັບແຜນການ, ແຜນງານ ແລະ ໂຄງການ ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ຕາມການຕົກລົງຂອງຂັ້ນເທິງ;

10) ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງຂັ້ນເທິງ.

ມາດຕາ 4 ຂອບເຂດສິດ

1. **ຄະນະກຳມາທິການ ເພື່ອປົກປ້ອງສັງຄົມ ຂັ້ນສູນກາງ ມີສິດ ດັ່ງນີ້:**
   1) ອອກແຈ້ງການໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດ ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໃນແຕ່ລະໄລຍະ;
   2) ລະດົມແຫຼ່ງທຶນຈາກພາຍໃນ ແລະ ຕ່າງປະເທດ ຕາມກົດໝາຍ ແລະ ລະບຽບການ ເພື່ອຮັບໃຊ້ເຂົ້າໃນການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໃນແຕ່ລະໄລຍະ;
   3) ແຕ່ງຕັ້ງບຸກຄະລາກອນ ຊ່ວຍວຽກກອງເລຂາ ເພື່ອຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ຕາມຄວາມຕ້ອງການຂອງວຽກງານ ໃນແຕ່ລະໄລຍະ;
   4) ຈັດກອງປະຊຸມຄົບຄະນະສະໄໝສາມັນ, ວິສາມັນ, ສະຫຼຸບ ແລະ ຖອດຖອນບົດຮຽນ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໃນແຕ່ລະໄລຍະ;
   5) ເຄື່ອນໄຫວແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ ທີ່ກ່ຽວຂ້ອງກັບຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການຕົກລົງຂອງຂັ້ນເທິງ;
   6) ປະຕິບັດສິດອື່ນໆ ຕາມການມອບໝາຍ ຂອງຂັ້ນເທິງ.

2. **ຄະນະກຳມາທິການ ເພື່ອປົກປ້ອງສັງຄົມ ຂັ້ນແຂວງ ມີສິດ ດັ່ງນີ້:**
   1) ອອກແຈ້ງການແນະນຳໃຫ້ບັນດາພະແນກການທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບ ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ຢູ່ທ້ອງຖິ່ນຂອງຕົນ ໃນແຕ່ລະໄລຍະ;
   2) ລະດົມແຫຼ່ງທຶນຈາກພາຍໃນ ແລະ ຕ່າງປະເທດ ຕາມກົດໝາຍ ແລະ ລະບຽບການ ເພື່ອຮັບໃຊ້ເຂົ້າໃນການຈັດຕັ້ງປະຕິບັດ ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ຢູ່ທ້ອງຖິ່ນຂອງຕົນ ໃນແຕ່ລະໄລຍະ;
   3) ແຕ່ງຕັ້ງບຸກຄະລາກອນ ຊ່ວຍວຽກກອງເລຂາ ເພື່ອຈັດຕັ້ງປະຕິບັດ ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ຕາມຄວາມຕ້ອງການຂອງວຽກງານໃນແຕ່ລະໄລຍະ;
   4) ຈັດກອງປະຊຸມຄົບຄະນະສະໄໝສາມັນ, ວິສາມັນ, ສະຫຼຸບ ແລະ ຖອດຖອນບົດຮຽນ ກ່ຽວກັບການຈັດຕັ້ງປະຕິບັດແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ຢູ່ທ້ອງຖິ່ນຂອງຕົນ ໃນແຕ່ລະໄລຍະ;
   5) ເຄື່ອນໄຫວແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ ທີ່ກ່ຽວຂ້ອງກັບ ການຈັດຕັ້ງປະຕິບັດ ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການຕົກລົງຂອງຂັ້ນເທິງ;
   6) ປະຕິບັດສິດອື່ນໆ ຕາມການມອບໝາຍ ຂອງຂັ້ນເທິງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ຄະນະກຳມາທິການ ເພື່ອການປົກປ້ອງສັງຄົມ ມີກົງຈັກຊ່ວຍວຽກ ປະກອບມີດັ່ງນີ້:

1. ຂັ້ນສູນກາງ

ຄະນະກຳມາທິການ ເພື່ອການປົກປ້ອງສັງຄົມ ຂັ້ນສູນກາງ ມີກອງເລຂາເປັນກົງຈັກຊ່ວຍວຽກ ໂດຍຖືເອົາ ກົມແຜນການ ແລະ ການຮ່ວມມືສາກົນ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຫ້ອງການ ຊຶ່ງຂຽນເປັນຕົວອັກສອນຫຍໍ້ວ່າ **“ ກຄປສ ”**.

2. ຂັ້ນແຂວງ

ຄະນະກຳມາທິການ ເພື່ອການປົກປ້ອງສັງຄົມ ຂັ້ນແຂວງ ມີກອງເລຂາເປັນກົງຈັກຊ່ວຍວຽກ ໂດຍຖືເອົາ ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ-ນະຄອນຫຼວງ ເປັນຫ້ອງການ ຊຶ່ງຂຽນເປັນຕົວ ອັກສອນຫຍໍ້ວ່າ **“ ກຄປຂ ”**.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ກ. ຂັ້ນສູນກາງ

ຄະນະກຳມາທິການ ເພື່ອການປົກປ້ອງສັງຄົມ ຂັ້ນສູນກາງ ປະກອບດ້ວຍ:

1. ທ່ານ ລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນປະທານ;
2. ທ່ານ ຮອງລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຮອງປະທານ; ທັງເປັນຜູ້ປະຈຳການ;
3. ທ່ານ ຮອງລັດຖະມົນຕີ ກະຊວງສາທາລະນະສຸກ ເປັນຮອງປະທານ;
4. ທ່ານ ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ເປັນຮອງປະທານ;
5. ທ່ານ ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ເປັນຮອງປະທານ;
6. ທ່ານ ຫົວໜ້າກົມແຜນການ ແລະ ການຮ່ວມມືສາກົນ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນກຳມະການ, ທັງເປັນຫົວໜ້າກອງເລຂາ;
7. ທ່ານ ຫົວໜ້າກົມແຜນການ, ກະຊວງແຜນການ ແລະ ການລົງທຶນ ເປັນກຳມະການ;
8. ທ່ານ ຫົວໜ້າອົງການປະກັນສັງຄົມແຫ່ງຊາດ, ກະຊວງ ຮສສ ເປັນກຳມະການ;
9. ທ່ານ ຫົວໜ້າຫ້ອງການປະກັນສຸຂະພາບແຫ່ງຊາດ, ກະຊວງສາທາລະນະສຸກ ເປັນກຳມະການ;
10. ທ່ານ ຫົວໜ້າກົມສັງຄົມສົງເຄາະ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນກຳມະການ;
11. ທ່ານ ຫົວໜ້າກົມງົບປະມານ, ກະຊວງການເງິນ ເປັນກຳມະການ;
12. ທ່ານ ຫົວໜ້າກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນກຳມະການ;
13. ທ່ານ ຫົວໜ້າກົມພັດທະນາຊົນນະບົດ ແລະ ສະຫະກອນ,ກະຊວງກະສິກຳ ແລະ ປ່າໄມ້ ເປັນກຳມະການ;
14. ທ່ານ ຫົວໜ້າກົມຄຸ້ມຄອງພົນລະເມືອງ, ກະຊວງພາຍໃນ ເປັນກຳມະການ;
15. ທ່ານ ຫົວໜ້າກົມປົກປ້ອງແຮງງານ, ສູນກາງສະຫະພັນກຳມະບານລາວ ເປັນກຳມະການ;

16. ທ່ານ ຮອງເລຂາທິການ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ເປັນກຳມະການ.

**ຂ. ຂັ້ນແຂວງ**

ຄະນະກຳມາທິການ ເພື່ອການປົກປ້ອງສັງຄົມ ຂັ້ນແຂວງ ມອບໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນຜູ້ກຳນົດ ຕາມການສະເໜີຂອງພະແນກແຮງງານ ແລະ ສະຫວັດດີການສັງຄົມ ໂດຍປະກອບບຸກຄະລາກອນ ໃຫ້ຄວາມສອດຄ່ອງກັບ ໂລງແມງ IV ຂໍ້ 1 ຂອງຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ທີ່ໄດ້ຖືກຮັບຮອງ ແລະ ປະກາດໃຊ້ ຕາມດຳລັດ ສະບັບເລກທີ 224/ນຍ, ລົງວັນທີ 01 ເມສາ 2020.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 7 ຫຼັກການ

ຄະນະກຳມາທິການ ເພື່ອການປົກປ້ອງສັງຄົມ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ ແລະ ຕົກລົງເປັນໝູ່ຄະນະ ກ່ຽວກັບວຽກງານຂອງຄະນະກຳມາທິການເພື່ອປົກປ້ອງສັງຄົມ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງສະມາຊິກໃນຄະນະກຳມາທິການເພື່ອປົກປ້ອງສັງຄົມ;
3. ທຸກການເຄື່ອນໄຫວ ຂອງຄະນະກຳມາທິການເພື່ອການປົກປ້ອງສັງຄົມ ແລະ ພະນັກງານ-ລັດຖະກອນຊ່ວຍວຽກ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມ ຂອງລັດຖະບານ, ຂະແໜງການ ແລະ ທ້ອງຖິ່ນບົນພື້ນຖານ ວິໄສທັດ, ຫລັກການລວມ ແລະ ເປົ້າໝາຍລວມ ຂອງຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໃຫ້ໄດ້ຮັບຜົນດີ.

### ມາດຕາ 8 ແບບແຜນວິທີເຮັດວຽກ

ຄະນະກຳມາທິການ ເພື່ອການປົກປ້ອງສັງຄົມ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ປະຕິບັດ ແລະ ແກ້ໄຂວຽກຢ່າງມີຈຸດສຸມ ຕາມ ແຜນການ, ແຜນງານ ແລະ ໂຄງການ ທີ່ໄດ້ຮັບຮອງໃນແຕ່ລະໄລຍະ ບົນພື້ນຖານ ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ;
2. ການເຄື່ອນໄຫວວຽກແບບບໍ່ປະຈຳການ ແມ່ນໃຫ້ຖືເອົາລະບອບການປະຊຸມປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ເປັນຮູບການ ແລະ ວິທີການ ຕິດຕາມ ຊຸກຍູ້, ກວດກາ, ສະຫຼຸບຖອດຖອນບົດຮຽນພ້ອມທັງລາຍງານປົກກະຕິໃຫ້ຂັ້ນເທິງຊາບ. ໃນກໍລະນີຈຳເປັນ ຄະນະກຳມາທິການເພື່ອການປົກປ້ອງສັງຄົມ ສາມາດເປີດກອງປະຊຸມວິສາມັນ ເພື່ອພິຈາລະນາ ບັນຫາຮີບດ່ວນ;
3. ປະສານສົມທົບຢ່າງແໜ້ນແຟ້ນກັບບັນດາຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ, ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ແນໃສ່ໝູນໃຊ້ກຳລັງແຮງຂອງທຸກພາກສ່ວນ ເພື່ອຈັດຕັ້ງປະຕິບັດ ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໃຫ້ບັນລຸຜົນສຳເລັດ ຕາມທີ່ໄດ້ກຳນົດໄວ້;

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 9 ງົບປະມານ ແລະ ຕາປະທັບ**

ຄະນະກຳມາທິການ ເພື່ອການປົກປ້ອງສັງຄົມ ຂັ້ນສູນກາງ ແລະ ຂັ້ນແຂວງ ນຳໃຊ້ງົບປະມານຂອງລັດຖະບານ, ງົບປະມານ ທີ່ໄດ້ຈາກການລະດົມທຶນຈາກສັງຄົມ, ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ ໃນແຕ່ລະປີ ຕາມກົດໝາຍ ແລະ ລະບຽບການ;

ຄະນະກຳມາທິການ ເພື່ອການປົກປ້ອງສັງຄົມ ຂັ້ນສູນກາງ ນຳໃຊ້ຕາປະທັບ ຂອງລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເຂົ້າໃນການເຄື່ອນໄຫວວຽກທາງລັດຖະການ.

ຄະນະກຳມາທິການ ເພື່ອການປົກປ້ອງສັງຄົມ ຂັ້ນແຂວງ ນຳໃຊ້ຕາປະທັບ ຂອງເຈົ້າແຂວງ-ເຈົ້າຄອງນະຄອນຫຼວງ ເຂົ້າໃນການເຄື່ອນໄຫວວຽກທາງລັດຖະການ.

ກອງເລຂາ ຄະນະກຳມາທິການ ເພື່ອປົກປ້ອງສັງຄົມ ຂັ້ນສູນກາງ ນຳໃຊ້ຕາປະທັບ ຂອງກົມແຜນການ ແລະ ການຮ່ວມມືສາກົນ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເຂົ້າໃນການໄຫວວຽກທາງລັດຖະການ.

ກອງເລຂາ ຄະນະກຳມາທິການ ເພື່ອປົກປ້ອງສັງຄົມ ຂັ້ນແຂວງ ນຳໃຊ້ຕາປະທັບ ຂອງພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ-ນະຄອນຫຼວງ ເຂົ້າໃນການໄຫວວຽກທາງລັດຖະການ.

**ມາດຕາ 10 ການຜັນຂະຫຍາຍ**

ມອບໃຫ້ ປະທານ ຄະນະກຳມາທິການ ເພື່ອການປົກປ້ອງສັງຄົມ ແຕ່ລະຂັ້ນ ແບ່ງຄວາມຮັບຜິດຊອບໃຫ້ແກ່ຮອງປະທານ ແລະ ກຳມະການ ແຕ່ລະທ່ານ ຢ່າງຊັດເຈນ ພ້ອມທັງກຳນົດພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ແບບແຜນວິທີເຮັດວຽກ ຂອງກອງເລຂາ ຄະນະກຳມາທິການ ເພື່ອການປົກປ້ອງສັງຄົມ ຕາມທີ່ໄດ້ກຳນົດໃນມາດຕາ 6 ຂອງດຳລັດສະບັບນີ້.

ສຳລັບຄະນະກຳມາທິການ ເພື່ອປົກປ້ອງສັງຄົມ ຂັ້ນແຂວງ ມອບໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມາທິການ ເພື່ອປົກປ້ອງສັງຄົມ ແຂວງ, ນະຄອນຫຼວງ ບົນພື້ນຖານດຳລັດສະບັບນີ້.

**ມາດຕາ 11 ການຈັດຕັ້ງປະຕິບັດ**

ຄະນະກຳມາທິການ ເພື່ອການປົກປ້ອງສັງຄົມ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ພັນຄຳ ວິພາວັນ